ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ແຫຼ່ງທຶນ ອກສກ ເປັນຂອງປະຊາຊົນ





ແຫຼ່ງທຶນ ຫຼື ສິນເຊື່ອທະນາຄານນະໂຍບາຍ (ທນບ) ຜ່ານອົງການຈັດຕັ້ງການເມືອງ-ສັງຄົມ ແລະ ກອງທຶນຂັ້ນບ້ານ (ອກສກ) ແມ່ນການສະໜອງສິນເຊື່ອໃນຮູບແບບໃໝ່ທີ່ມີເປົ້າໝາຍ ແລະ ກົນໄກ ເພື່ອຮັບປະກັນທາງດ້ານປະສິດທິຜົນໃນການໃຫ້ສິນເຊື່ອ ປະກອບສ່ວນຊຸກຍູ້ການຜະລິດສິນຄ້າແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຜັນຂະຫຍາຍວຽກງານ 3 ສ້າງເຂົ້າສູ່ລວງເລິກ ພ້ອມທັງເປັນການເສີມຂະຫຍາຍບົດບາດຂອງອົງການຈັດຕັ້ງການເມືອງ-ສັງຄົມຂັ້ນທ້ອງຖິ່ນເຮັດໃຫ້ຄອບຄົວທຸກຍາກໄດ້ເຂົ້າເຖິງແຫຼ່ງທຶນຂອງ ທນບ ຫຼາຍຂຶ້ນ.

ທ່ານ ວຸດທິ ເລື່ອນວິໄລວົງ ຄະນະພັກທະນາຄານແຫ່ງ ສປປ ລາວ, ຜູ້ອຳນວຍການ ທນບ ແຈ້ງໃຫ້ຮູ້ວ່າ: ອກສກ ແມ່ນອົງການຈັດຕັ້ງມະຫາຊົນ ແລະ ກອງທຶນໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວຢູ່ຂັ້ນບ້ານໂດຍມີພາລະບົດບາດໜ້າທີ່ຊ່ວຍຄຸ້ມຄອງບໍລິຫານແຫຼ່ງທຶນຂອງ ທນບ ໃຫ້ມີປະສິດທິຜົນ ແລະ ຮ່ວມມືກັບ ທນບ ໃນການຈັດຕັ້ງປະຕິບັດໜ້າທີ່ຕົວຈິງໃນການຈັດຕັ້ງກຸ່ມກູ້ຢືມເງິນ, ຄັດເລືອກຫົວໜ້າກຸ່ມ, ຮອງກຸ່ມ, ຄັດເລືອກສະມາຊິກຜູ້ມີເງື່ອນໄຂເຂົ້າຮ່ວມໃນກຸ່ມ, ກຳນົດໂຄງການ, ສ້າງແຜນສິນເຊື່ອກຳນົດວົງເງິນກູ້ໃຫ້ຄອບຄົວສະມາຊິກ, ເຂົ້າຮ່ວມໃນການປ່ອຍເງິນກູ້, ກວດກາຕິດຕາມການນຳໃຊ້ເງິນກູ້, ຮ່ວມກັບ ທນບ ໃນການແກ້ໄຂບັນຫາໜີ້ສິນ ແລະ ບັນຫາອື່ນໆ ທີ່ຕິດພັນກັບວຽກງານຂອງ ທນບ.

ສຳລັບເງື່ອນໄຂຂອງບ້ານທີ່ຈັດຕັ້ງເປັນ ອກສກ ນັ້ນ ແມ່ນບ້ານທີ່ມີຄວາມເຂັ້ມແຂງດ້ານການຈັດຕັ້ງ ແລະ ເຄື່ອນໄຫວວຽກງານດີ, ສະມາຊິກ ແລະ ປະຊາຊົນພາຍໃນບ້ານໃຫ້ຄວາມເຊື່ອໝັ້ນໃນການບໍລິຫານດ້ວຍຄວາມຊື່ສັດ ແລະ ທ່ຽງທຳ, ສະມາຊິກມີຄວາມພ້ອມ ແລະ ເປັນເອກະພາບທີ່ຈະເຮັດວຽກຮ່ວມກັບ ທນບ; ສະເພາະບຸກຄົນທີ່ຈະປະກອບເປັນຄະນະເຮັດວຽກ ຕ້ອງມີລະດັບຄວາມຮູ້ຢ່າງໜ້ອຍຈົບມັດທະຍົມຕົ້ນ, ຮັບການເຫັນດີຈາກອົງການຈັດຕັ້ງກ່ຽວຂ້ອງ, ອຳນາດການປົກຄອງບ້ານ ແລະ ຂັ້ນເມືອງ;

ກ່ຽວກັບຄວາມຮັບຜິດຊອບແຕ່ລະຝ່າຍຂອງ ອກສກ ແມ່ນຈັດຕັ້ງປະຕິບັດເນື້ອໃນການມອບສິດຕາມສັນຍາທີ່ໄດ້ເຊັນຮ່ວມກັນ; ຈັດແບ່ງພະນັກງານຮັບຜິດຊອບແຕ່ລະໜ້າວຽກ ໂດຍມີການຕົກລົງແຕ່ງຕັ້ງ; ສ້າງແຜນການຕິດຕາມກວດກາການເຄື່ອນໄຫວລູກຄ້າເງິນກູ້ຂອງຕົນປະຈຳງວດ ແລະ ປະຈຳປີ; ປະສານສົມທົບພາກສ່ວນ ແລະ ຂະແໜງການກ່ຽວຂ້ອງຊຸກຍູ້ດ້ານວິຊາການແກ່ລູກຄ້າ; ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃຫ້ ທນບ ຮັບຊາບເປັນປະຈຳໃນທຸກເດືອນ, ງວດ ແລະ ປີ; ຈັດກອງປະຊຸມຮ່ວມກັບ ທນບ ຕາມຂັ້ນຕອນເພື່ອປະເມີນຜົນການຈັດຕັ້ງປະຕິບັດ.

ສະເພາະຄວາມຮັບຜິດຊອບຂອງທນບແມ່ນສະໜອງແຫຼ່ງທຶນຕາມແຜນການແຕ່ລະປີ, ສະໜອງອຸປະກອນຮັບໃຊ້ທີ່ຈຳເປັນ, ແບບພິມເອກະສານຕ່າງໆທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກສິນເຊື່ອ; ຈັດສຳມະນາດ້ານວິຊາການໃຫ້ກັບ ອກສກ ຜູ້ທີ່ຈະເຮັດວຽກຕົວຈິງໃຫ້ມີຄວາມຮູ້-ຄວາມສາມາດເຮັດວຽກຕາມການມອບໝາຍ; ອຳນວຍຄວາມສະດວກໃຫ້ອົງການຈັດຕັ້ງ ອກສກ ໃນການປະຕິບັດວຽກຕົວຈິງຕາມຂອບເຂດສິດທີ່ຮັບອະນຸມັດໃຫ້ຈັດຕັ້ງປະຕິບັດ; ອອກແຈ້ງການໃຫ້ອົງການຈັດຕັ້ງທີ່ຮັບມອບສິດເພື່ອຊາບກ່ຽວກັບການຕົກລົງບັນຫາຕ່າງໆທີ່ກ່ຽວຂ້ອງກັບວຽກງານສິນເຊື່ອຂອງ ທນບ ທີ່ພົວພັນເຖິງ ອກສກ ແລະ ຕິດຕາມກວດກາບັນດາເປົ້າໝາຍທີ່ໄດ້ປ່ອຍເງິນກູ້. ນອກນີ້, ທັງ ອກສກ ແລະ ທນບ ຍັງມີຄວາມຮັບຜິດຊອບຮ່ວມກັນ ເປັນຕົ້ນພິຈາລະນາຮັບຮອງເອົາແຜນການສິນເຊື່ອແຕ່ລະປີຕາມການສັງລວມ ແລະ ນຳສະເໜີຂອງອົງການຮັບມອບສິດໃຫ້ປະຕິບັດ; ຮັບຮອງຜົນກ່ຽວກັບການຈັດຕັ້ງປະຕິບັດວຽກງານຕາມຄວາມຮັບຜິດຊອບເພື່ອລາຍງານຂັ້ນເທິງຕາມສາຍການຈັດຕັ້ງຂອງຕົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຈັດກອງປະຊຸມສຳມະນາ, ຮ່ວມປຶກສາຫາລືແກ້ໄຂບັນຫາທີ່ກ່ຽວຂ້ອງຕາມການສະເໜີຂອງອີກຝ່າຍ.

ທ່ານຜູ້ອຳນວຍການ ທນບ ຍັງແຈ້ງໃຫ້ຮູ້ເຖິງໝາກຜົນໃນການຈັດຕັ້ງປະຕິບັດການສະໜອງສິນເຊື່ອຜ່ານ ອກສກ ຊຶ່ງຜ່ານການຈັດຕັ້ງປະຕິບັດເຫັນວ່າ: ໄດ້ຮັບຜົນສຳເລັດຫຼາຍປະການ ໂດຍໄດ້ກຳນົດເອົາບ້ານທີ່ມີເງື່ອນໄຂ, ອົງການຈັດຕັ້ງບ້ານທີ່ມີຄວາມເຂັ້ມແຂງ, ຍອດໜີ້ NPL ຕາມກຳນົດໄວ້; ມາຮອດປະຈຸບັນ ສາມາດປະຕິບັດໄດ້ທັງໝົດມີ 1 ສຳນັກງານໃຫຍ່, 10 ສາຂາ, 3 ຫ້ອງການປະສານງານ ແລະ 26 ໜ່ວຍບໍລິການຫຼືເທົ່າກັບ 15 ແຂວງ, 48 ເມືອງ, 117 ບ້ານ, 912 ກຸ່ມ, 5.552 ຄອບຄົວໃນນັ້ນຢູ່ເມືອງສັງທອງນະຄອນຫຼວງວຽງຈັນ ສາມາດຈັດຕັ້ງປະຕິບັດສະໜອງສິນເຊື່ອຜ່ານ ອກສກ ໄດ້ຫຼາຍກວ່າໝູ່ຄືປະຕິບັດໄດ້ 14 ບ້ານ, ມີຍອດສິນເຊື່ອທັງໝົດ 13,710 ຕື້ກວ່າກີບ ສາມາດເກັບຕົ້ນທຶນໄດ້ 4,30 ຕື້ກີບ ແລະ ເກັບດອກເບ້ຍໄດ້ 0,47 ຕື້ກີບ, ຜ່ານການຈັດຕັ້ງປະຕິບັດສາມາດເກັບໜີ້ຕົ້ນທຶນ ແລະ ດອກເບ້ຍໄດ້ຕາມກຳນົດ; ສະເລ່ຍຢູ່ໃນລະດັບ 95-100% ແລະ ທ່ານຍັງໄດ້ເນັ້ນໜັກຕື່ມວ່າ: ການຈັດຕັ້ງປະຕິບັດສິນເຊື່ອຜ່ານ ອກສກ ແມ່ນພວກເຮົາໄດ້ຈັດຕັ້ງຜັນຂະຫຍາຍບົດຮຽນໃນການສະໜອງສິນເຊື່ອຂອງທະນາຄານນະໂຍບາຍສັງຄົມຂອງ ສສ.ຫວຽດນາມ ເຂົ້າສູ່ທ້ອງຖິ່ນຕ່າງໆຂອງ ສປປ ລາວ ຢ່າງປະດິດສ້າງ ແລະ ແທດເໝາະກັບສະພາບ, ເງື່ອນໄຂ, ທ່າແຮງຕົວຈິງຂອງທ້ອງຖິ່ນ; ຜ່ານການຈັດຕັ້ງປະຕິບັດສິນເຊື່ອທີ່ມີສ່ວນຮ່ວມຂອງ ອກສກ ໄດ້ເຮັດໃຫ້ອົງການດັ່ງກ່າວມີຄວາມເຂັ້ມແຂງ, ພະນັກງານຂັ້ນບ້ານໄດ້ຍົກລະດັບຄວາມຮູ້-ຄວາມສາມາດໃນການບໍລິຫານແຫຼ່ງທຶນສູງຂຶ້ນ ສາມາດປ່ອຍເຂົ້າຖືກເປົ້າໝາຍ ເຮັດໃຫ້ປະຊາຊົນໄດ້ນຳໃຊ້ທຶນຮອນດອກເບ້ຍຕ່ຳຂອງລັດຖະບານເຂົ້າໃນການຜະລິດ, ການບໍລິການ, ແກ້ໄຂຄວາມທຸກຍາກ ຕາມແນວທາງຂອງພັກ ແລະ ແຜນພັດທະນາເສດຖະກິດຂອງຊາດ, ຂອງທ້ອງຖິ່ນໃຫ້ດີຂຶ້ນເປັນກ້າວໆ ແລະ ປະຕິບັດພາລະກິດຂອງຕົນໃຫ້ສົມກັບວ່າ: **"ທນບ ເປັນທະນາຄານຂອງປະຊາຊົນ".**

**# ໂດຍ: ຣັດສະໝີ ດວງສັດຈະ**

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ